ສົ່ງ: ທ່ານ ຫົວໜ້າສຳນັກງານ ຄຄຊ "ເພື່ອຊາບ".

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

****** **** ******

ທະນາຄານແຫ່ງ ສປປ ລາວ

ຫ້ອງການ

ສຳນັກງານ ຄຄຊ
ເລກທີ 118
ວັນທີ 03 FEB 2015
ໂທລະສັບ 021 217770

ເລກທີ: 05 /ຫກ

ນະຄອນຫຼວງວຽງຈັນ, ວັນທີ: 02 FEB 2015

**ລາຍງານການເຄື່ອນໄຫວປະຈຳອາທິດ**
**19/01/2015 ຫາ 23/01/2015 ແລະ ແຜນການເຄື່ອນໄຫວໃນອາທິດຕໍ່ໄປ**
**ຂອງທະນາຄານແຫ່ງ ສປປ ລາວ**

## I. ວຽກງານການເມືອງແນວຄິດ

ພະນັກງານທຸກຄົນມີຄວາມອຸ່ນອ່ຽນທຸ່ນທ່ຽງ ເຊື່ອໝັ້ນຕໍ່ການນຳພາຂອງພັກ-ລັດ ມີສະຕິຕໍ່ການຈັດຕັ້ງ ແລະ ລະບຽບກົດໝາຍຢ່າງເຄັ່ງຄັດ; ຕັ້ງໜ້າປະຕິບັດວຽກງານຕາມພາລະບົດບາດ, ຕາມການຈັດຕັ້ງມອບໝາຍ, ປະຕິບັດວຽກງານຕາມລະບອບລວມສູນປະຊາທິປະໄຕ ໂດຍບຸກຄົນຮັບຜິດຊອບ ແລະ ປະຕິບັດລະບຽບລັດຖະກອນຢ່າງຕັ້ງໜ້າ, ມີຄວາມສາມັກຄີທັງພາຍໃນ ແລະ ພາຍນອກເປັນຢ່າງດີ.

## II. ວຽກງານວິຊາສະເພາະ

### 1. ສະພາບເສດຖະກິດເງິນຕາສາກົນ

#### 1.1 ອັດຕາແລກປ່ຽນສາກົນ

ອັດຕາແລກປ່ຽນຢູ່ຕະຫຼາດສາກົນອາທິດນີ້ທຽບໃສ່ອາທິດຜ່ານມາເຫັນວ່າ: ເງິນເອີໂຣ ແລະ ບາງສະກຸນເງິນໃນພາກພື້ນອາຊີອ່ອນຄ່າລົງ ເມື່ອທຽບໃສ່ເງິນໂດລາສະຫະລັດ ຍ້ອນຕົວເລກທາງດ້ານເສດຖະກິດຂອງສະຫະລັດອອກມາດີ ເປັນຕົ້ນແມ່ນດັດຊະນີຄວາມເຊື່ອໝັ້ນທຸລະກິດຂະໜາດນ້ອຍຂອງສະຫະລັດ ເພີ່ມຂຶ້ນ ຈາກ 98,1 ໃນເດືອນ 11/2014 ເປັນ 100,4 ໃນເດືອນ 12/2014 ແລະ ຜົນສຳຫຼວດດັດຊະນີຄວາມເຊື່ອໝັ້ນທາງດ້ານເສດຖະກິດສະຫະລັດ ເພີ່ມຂຶ້ນ ຈາກ 48,4 ໃນເດືອນ 12/2014 ເປັນ 51,5 ໃນເດືອນ 1/2015. ໃນຂະນະທີ່, ດຸນການຄ້າຂອງເອີຣົບ ຫຼຸດລົງ ຈາກ 23,6 ຕື້ເອີໂຣ ໃນເດືອນ 10/2014 ເປັນ 20 ຕື້ເອີໂຣ ໃນເດືອນ 11/2014. ສ່ວນເງິນເຢນ, ບາດ ແລະ ເປໂຊ ແຂງຄ່າຂຶ້ນເມື່ອທຽບໃສ່ເງິນໂດລາສະຫະລັດ ຍ້ອນດັດຊະນີພາກອຸດສາຫະກຳຂອງຍີ່ປຸ່ນ ເພີ່ມຂຶ້ນ ຈາກ -0,1% ໃນເດືອນ 10/2014 ເປັນ 0,2% ໃນເດືອນ 11/2014.

| ສະກຸນເງິນກີບທຽບກັບໂດລາ | ອາທິດຜ່ານມາ 13/01/2015 | ອາທິດນີ້ 20/01/2015 | ເປີເຊັນ ແຂງຄ່າ(+) /ອ່ອນຄ່າ(–) |
|---|---|---|---|
| ເອີໂຣ/ ໂດລາ | 1,1833 | 1,1583 | 2,16% |
| ໂດລາ/ເຢນ | 118,24 | 118,17 | 0,06% |
| ໂດລາ/ບາດ | 32,84 | 32,69 | 0,46% |
| ໂດລາ/ເປໂຊ | 44,81 | 44,63 | 0,40% |
| ໂດລາ/ຣູເປັຍ | 1.2596,89 | 1.2612,11 | -0,12% |
| ໂດລາ/ໂດລາສິງກະໂປ | 1,3350 | 1,3374 | -0,18% |
| ໂດລາ/ຢວນ | 6,2008 | 6,2152 | -0,23% |

### 1.2 ສະພາບລາຄານ້ຳມັນ ແລະ ຄຳໃນຕະຫຼາດໂລກ

ລາຄານ້ຳມັນໃນຕະຫຼາດໂລກເພີ່ມຂຶ້ນ 4,98% ຈາກ 45,08 ໂດລາ/ບາເຣວ ມາເປັນ 47,33 ໂດລາ/ບາເຣວ ຍ້ອນກອງທຶນພະລັງງານສາກົນ (IEA) ປັບຫຼຸດປະລິມານການຜະລິດນ້ຳມັນດິບຂອງ Non-OPEC ໃນປີ 2015 ລົງ ຈາກ 0,35 ລ້ານບາເຣວ ເປັນ 57,49 ລ້ານບາເຣວ. ນອກກັບກອງທຶນດັ່ງກ່າວ ໄດ້ປັບເພີ່ມການຄາດຄະເນຄວາມຕ້ອງການນ້ຳມັນດິບຂອງໂລກ ເພີ່ມຂຶ້ນ 0,91 ລ້ານບາເຣວ ຈາກຄາດຄະເນໃນຄັ້ງຜ່ານມາ;

ລາຄາຄຳໃນຕະຫຼາດໂລກເພີ່ມຂຶ້ນ 3,47% ຈາກ 1.237,07 ໂດລາ/ອອນ ມາເປັນ 1.280,01 ໂດລາ/ອອນ ຍ້ອນນັກລົງທຶນເຂົ້າຊື້ຄຳ ແລະ ສັນຍາຊື້-ຂາຍຄຳ ເພື່ອເກງກຳໄລ ແລະ ປ້ອງກັນຄວາມສ່ຽງ ຈາກຄວາມບໍ່ແນ່ນອນຂອງເສດຖະກິດໂລກ.

## 2. ສະພາບເສດຖະກິດເງິນຕາພາຍໃນ

### 2.1 ສະພາບອັດຕາແລກປ່ຽນພາຍໃນ

ສະພາບອັດຕາແລກປ່ຽນອາທິດນີ້ທຽບໃສ່ອາທິດຜ່ານມາ ເຫັນວ່າເງິນກີບທຽບໃສ່ເງິນໂດລາອ່ອນຄ່າລົງ 0,23% ສຳລັບອັດຕາ ທທກ ແລະ ອ່ອນຄ່າລົງ 0,01% ສຳລັບອັດຕາຕະຫຼາດ, ສ່ວນເງິນກີບທຽບໃສ່ເງິນບາດອ່ອນຄ່າລົງ 0,72% ສຳລັບອັດຕາ ທທກ ແລະ ອ່ອນຄ່າລົງ 0,43% ສຳລັບອັດຕາຕະຫຼາດ, ທຽບໃສ່ປີຜ່ານມາເຫັນວ່າ: ເງິນກີບທຽບໃສ່ເງິນໂດລາອ່ອນຄ່າລົງ 0,55% ສຳລັບອັດຕາ ທທກ ແລະ ອ່ອນຄ່າລົງ 0,31% ສຳລັບອັດຕາຕະຫຼາດ, ສ່ວນເງິນກີບທຽບໃສ່ເງິນບາດອ່ອນຄ່າລົງ 1,05% ສຳລັບອັດຕາ ທທກ ແຕ່ແຂງຄ່າຂຶ້ນ 0,54% ສຳລັບອັດຕາຕະຫຼາດ.

| ອັດຕາ | ອາທິດຜ່ານມາ 07-13/01/2015 | | | ອາທິດນີ້ 14-19/01/2015 | | | % (+) ເງິນກີບແຂງ/ (-)ອ່ອນຄ່າ | | |
|---|---|---|---|---|---|---|---|---|---|
| | ຊື້ | ຂາຍ | ສະເລັ່ຍ | ຊື້ | ຂາຍ | ສະເລັ່ຍ | ຊື້ | ຂາຍ | ສະເລັ່ຍ |
| ອັດຕາທະຄານ[1] | | | | | | | | | |
| ໂດລາ | 8,092.17 | 8,124.63 | 8,104.83 | 8,104.70 | 8,134.94 | 8,123.25 | -0.15% | -0.13% | -0.23% |
| ບາດ | 247.86 | 249.09 | 248.59 | 250.12 | 251.20 | 250.39 | -0.90% | -0.84% | -0.72% |
| ອັດຕາຕະຫຼາດ | | | | | | | | | |
| ໂດລາ | 8,112.68 | 8,158.60 | 8,135.64 | 8,112.53 | 8,160.00 | 8,136.27 | 0.002% | -0.02% | -0.01% |
| ບາດ | 248.13 | 250.21 | 249.17 | 249.41 | 251.10 | 250.25 | -0.51% | -0.35% | -0.43% |
| ຜົດຕ່າງອັດຕາ ທທກ ແລະ ຕະຫຼາດ: (+) ແມ່ນອັດຕາທະນາຄານທຸລະກິດແຂງກວ່າຕະຫຼາດ, (-) ແມ່ນອັດຕາທະນາຄານທຸລະກິດອ່ອນກວ່າຕະຫຼາດ, | | | | | | | | | |
| ໂດລາ | 0,25% | 0,42% | 0,38% | 0,10% | 0,31% | 0,16% | | | |
| ບາດ | 0,11% | 0,45% | 0,23% | -0,28% | -0,04% | -0,05% | | | |

### 2.2 ສະພາບຖານເງິນຕາ ແລະ ປະລິມານເງິນ M2

- ຖານເງິນຕາ ປະຈຳອາທິດນີ້ ຫຼຸດລົງ 1,32% ທຽບໃສ່ວັນທີ 16/01/2015, ຖ້າທຽບໃສ່ໄລຍະດຽວກັນຂອງປີຜ່ານມາ ເພີ່ມຂຶ້ນ 53,63%.
- ປະລິມານເງິນ $M_2$ ເພີ່ມຂຶ້ນ 0,08% ເມື່ອທຽບໃສ່ວັນທີ 16/01/2015, ຖ້າທຽບໃສ່ໄລຍະດຽວກັນຂອງປີຜ່ານມາ ເພີ່ມຂຶ້ນ 26,15%.

### 2.3 ການຊື້-ຂາຍເງິນຕາ (ເງິນໂດລາ ແລະ ເງິນບາດ) ຂອງທົ່ວລະບົບທະນາຄານທຸລະກິດ

- ການຊື້-ຂາຍເງິນຕາຕ່າງປະເທດ (ເງິນໂດລາ ແລະ ເງິນບາດ) ຂອງບັນດາທະນາຄານທຸລະກິດກັບລູກຄ້າພາຍໃນ ປະຈຳອາທິດ (ວັນທີ 14-20/01/2015) ເຫັນວ່າ ທທກ ຊື້ໂດລາສຸດທິ 12,57 ລ້ານໂດລາ (ໃນນີ້ ຊື້ໂດລາໄດ້ 52,83 ລ້ານໂດລາ ແລະ ຂາຍໂດລາໄດ້ 40,26 ລ້ານໂດລາ) ແລະ ຂາຍເງິນບາດສຸດທິ 273,20 ລ້ານບາດ (ໃນນີ້ ຊື້ບາດໄດ້ 382,38 ລ້ານບາດ ແລະ

[1] %ການປ່ຽນແປງຂອງອັດຕາແລກປ່ຽນ ໃນອັດຕາຂອງ ທທກ ແມ່ນໄດ້ຈາກອັດຕາສະເລ່ຍຖ່ວງນ້ຳໜັກ;

ຂາຍບາດໄດ້ 655,58 ລ້ານບາດ); ມູນຄ່າການຊື້-ຂາຍເງິນໂດລາ ແລະ ເງິນບາດເມື່ອທຽບໃສ່ອາທິດຜ່ານມາເຫັນວ່າ: ເງິນໂດລາ ຫຼຸດລົງ 35,77% ແລະ ຫຼຸດລົງ 16,38% ສໍາລັບເງິນບາດ;

- ການຊື້-ຂາຍລະຫວ່າງທະນາຄານທຸລະກິດດ້ວຍກັນເຫັນວ່າ: ປະລິມານການຊື້-ຂາຍເງິນໂດລາມີ ຈໍານວນ 8,13 ລ້ານໂດລາ ແລະ ເງິນບາດມີ ຈໍານວນ 150,54 ລ້ານບາດ;
- ການຊື້-ຂາຍລະຫວ່າງ ທຫລ ກັບ ທທກ ເຫັນວ່າ: ທຫລ ຂາຍໂດລາສຸດທິ ຈໍານວນ 6,56 ລ້ານໂດລາ ແລະ ຂາຍບາດສຸດທິ ຈໍານວນ 118 ລ້ານບາດ;
- ການຊື້-ຂາຍລະຫວ່າງ ທຫລ ກັບ ພາກສ່ວນອື່ນໆ ເຫັນວ່າ: ທຫລ ຊື້ໂດລາໄດ້ສຸດທິ ຈໍານວນ 0,49 ລ້ານໂດລາ ແລະ ຊື້ບາດໄດ້ສຸດທິ ຈໍານວນ 9,57 ລ້ານບາດ.

ສະພາບການ ຊື້-ຂາຍເງິນຕາຕ່າງປະເທດ

(ຫົວໜ່ວຍ: ລ້ານ)

| | ອາທິດຜ່ານມາ 07-13/01/2015 | | ອາທິດນີ້ 14-20/01/2015 | | (%) +ເພີ່ມຂຶ້ນ /-ຫລຸດລົງ | |
|---|---|---|---|---|---|---|
| | ໂດລາ | ບາດ | ໂດລາ | ບາດ | ໂດລາ | ບາດ |
| 1, ການຊື້ເງິນຕາຕ່າງປະເທດ | | | | | | |
| - ທ/ຄທຸລະກິດລັດ | 30,13 | 164,48 | 14,31 | 206,97 | -52,51% | 25,83% |
| - ທ/ຄທຸລະກິດອື່ນໆ | 49,80 | 192,89 | 38,52 | 175,41 | -22,65% | -9,06% |
| ລວມຊື້: | 79,93 | 357,37 | 52,83 | 382,38 | -33,91% | 7,00% |
| 2, ການຂາຍເງິນຕາຕ່າງປະເທດ | | | | | | |
| - ທ/ຄທຸລະກິດລັດ | 18,51 | 228,09 | 19,25 | 185,26 | 3,98% | -18,78% |
| - ທ/ຄທຸລະກິດອື່ນໆ | 46,49 | 655,75 | 21,01 | 470,32 | -54,80% | -28,28% |
| ລວມຂາຍ: | 64,99 | 883,84 | 40,26 | 655,58 | -38,06% | -25,83% |
| ຊື້-ຂາຍສຸດທິ ທທກ | 14,93 | -526,47 | 12,57 | -273,20 | -15,85% | -48,11% |
| ຜິດດ່ຽງ ຊື້-ຂາຍ | 18,68 | -147,32 | 23,79 | -71,45 | 510,43% | 758,78% |
| ມູນຄ່າການຊື້-ຂາຍ | 144,92 | 1.241,21 | 93,09 | 1.037,96 | -35,77% | -16,38% |
| 3, ຊື້-ຂາຍລະຫວ່າງ ທຫລ ກັບ ທທກ | | | | | | |
| - ທຫລ ຊື້ຈາກ ທທກ | 6,00 | 0,00 | 0,00 | 0,00 | | |
| - ທຫລ ຂາຍໃຫ້ ທທກ | 8,43 | 218,00 | 6,56 | 118,00 | | |
| ຊື້-ຂາຍສຸດທິ ທຫລ | -2,43 | -218,00 | -6,56 | -118,00 | | |
| 4, ຊື້-ຂາຍ ລະຫວ່າງ ທທກ ດ້ວຍກັນ | 8,33 | 107,98 | 8,13 | 150,54 | | |
| 5, ຊື້-ຂາຍລະຫວ່າງ ທຫລ ກັບ ພາກສ່ວນ ອື່ນໆ (ກະຊວງການເງິນ, ຮ້ານແລກປ່ຽນ) | | | | | | |
| - ທຫລ ຊື້ຈາກ ພາກສ່ວນອື່ນໆ | 1,07 | 84,77 | 1,03 | 11,20 | | |
| - ທຫລ ຂາຍໃຫ້ ພາກສ່ວນອື່ນໆ | 2,64 | 0,00 | 0,55 | 1,63 | | |
| ຊື້-ຂາຍສຸດທິ ທຫລ | -1,57 | 84,77 | 0,49 | 9,57 | | |

## 2.4 ສະພາບອັດຕາເງິນເຟີ້

ອັດຕາເງິນເຟີ້ ປະຈໍາເດືອນ 01/2015 (ຕົວເລກຄາດຄະເນ) ຄາດວ່າຈະຢູ່ໃນລະດັບ 2,20% ຫຼຸດລົງ 0,20% ຈາກ 2,40% ໃນເດືອນ 12/2014.

**2.5 ການຄຸ້ມຄອງເງິນຕາຕ່າງປະເທດ ແລະ ການສົ່ງເສີມນຳໃຊ້ເງິນກີບ**

ທຫລ ໄດ້ອະນຸຍາດໃຫ້ທະນາຄານທຸລະກິດນຳເງິນຕາຕ່າງປະເທດອອກນອກ ສປປ ລາວ ຈຳນວນ 45,6 ລ້ານໂດລາສະຫະລັດທຽບເທົ່າ, ເພີ່ມຂຶ້ນ 18,1% ທຽບໃສ່ອາທິດຜ່ານມາ.

**2.6 ສະພາບການເຄື່ອນໄຫວຊໍາລະສະສາງຜ່ານທະນາຄານແຫ່ງ ສປປ ລາວ**

ແຊັກເຄື່ອນໄຫວຜ່ານສູນຊໍາລະສະສາງຂອງ ທຫລ ໃນອາທິດນີ້ ຈໍານວນ 843 ສະບັບ ທຽບໃສ່ອາທິດຜ່ານມາ ເພີ່ມຂຶ້ນ 8,49% ລວມຈໍານວນເງິນທີ່ໂອນຜ່ານທັງໝົດ 731,36 ຕື້ກີບ ເພີ່ມຂຶ້ນ 84,51% ເມື່ອທຽບໃສ່ອາທິດຜ່ານມາ.

ຕິດຕາມການໂອນເງິນຜ່ານລະບົບຊໍາລະສະສາງແບບມູນຄ່າສູງ (RTGS) (16-22/01/2015) ມີຈໍານວນ 1,151 ຄັ້ງ ໂດຍມີມູນຄ່າ 344,91 ຕື້ກີບ ຫຼຸດລົງ 52,71% ຊຶ່ງທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ ເຮັດທຸລະກໍາຫຼາຍກວ່າໝູ່ ຈໍານວນ 387 ຄັ້ງ.

**2,7 ສະພາບການຊື້-ຂາຍຫຼັກຊັບໃນຕະຫຼາດຫຼັກຊັບລາວ**

ດັດຊະນີຕະຫຼາດຫຼັກຊັບລາວ ໃນອາທິດນີ້ ປິດຢູ່ທີ່ 1.413,58 ຈຸດ ຫຼຸດລົງ 0,03% ເມື່ອທຽບໃສ່ອາທິດຜ່ານມາ, ຕະຫຼອດອາທິດ ມີປະລິມານຊື້-ຂາຍຮຸ້ນທັງໝົດ 491.635 ຮຸ້ນ ແລະ ມີມູນຄ່າການຊື້-ຂາຍ 3,30 ຕື້ກີບ ຫຼຸດລົງ 84,76% ທຽບໃສ່ອາທິດຜ່ານມາ. ໂດຍອາທິດນີ້ ມີຜູ້ລົງທຶນຕ່າງປະເທດຊື້-ຂາຍສະເລ່ຍກວມເອົາ 56,22% ຂອງມູນຄ່າການຊື້-ຂາຍທັງໝົດ.

ຮຸ້ນຂອງທະນາຄານ ການຄ້າຕ່າງປະເທດລາວ ມະຫາຊົນ (BCEL) ມີລາຄາຊື້-ຂາຍສະເລ່ຍ 7.017 ກີບ/ຮຸ້ນ ເພີ່ມຂຶ້ນ 2 ກີບ/ຮຸ້ນ ເມື່ອທຽບໃສ່ອາທິດຜ່ານມາ, ມີປະລິມານຊື້-ຂາຍທັງໝົດ 63.735 ຮຸ້ນ ແລະ ມີມູນຄ່າການຊື້-ຂາຍ 447,23 ລ້ານກີບ ເພີ່ມຂຶ້ນ 155,76% ເມື່ອທຽບໃສ່ອາທິດຜ່ານມາ. ໂດຍອາທິດນີ້ ຜູ້ລົງທຶນຕ່າງປະເທດຊື້-ຂາຍສະເລ່ຍກວມເອົາ 36,42% ຂອງມູນຄ່າການຊື້-ຂາຍຮຸ້ນ BCEL ທັງໝົດ. ສັດສ່ວນການຖືຄອງຮຸ້ນຂອງຜູ້ລົງທຶນຕ່າງປະເທດແມ່ນຢູ່ທີ່ 9,49%[2].

ຮຸ້ນຂອງບໍລິສັດ ຜະລິດ-ໄຟຟ້າລາວ ມະຫາຊົນ (EDL-Gen) ມີລາຄາຊື້-ຂາຍສະເລ່ຍ 7.084 ກີບ/ຮຸ້ນ ເພີ່ມຂຶ້ນ 35 ກີບ/ຮຸ້ນ ເມື່ອທຽບໃສ່ອາທິດທີ່ຜ່ານມາ, ມີປະລິມານຊື້-ຂາຍທັງໝົດ 368.755 ລ້ານຮຸ້ນ ແລະ ມີມູນຄ່າການຊື້-ຂາຍ 2,61 ຕື້ກີບ ຫຼຸດລົງ 83,75% ເມື່ອທຽບໃສ່ອາທິດຜ່ານມາ. ໂດຍເປັນການຊື້-ຂາຍຂອງຜູ້ລົງທຶນຕ່າງປະເທດສະເລ່ຍກວມເອົາ 66,01% ຂອງມູນຄ່າການຊື້-ຂາຍຮຸ້ນ EDL-Gen ທັງໝົດ. ສັດສ່ວນຖືຄອງຮຸ້ນຂອງຜູ້ລົງທຶນຕ່າງປະເທດແມ່ນ 14,21%[3].

ຮຸ້ນຂອງບໍລິສັດ ລາວເວີນ ມະຫາຊົນ (LWPC) ມີລາຄາປິດຢູ່ທີ່ 8.550 ກີບ/ຮຸ້ນ ບໍ່ປ່ຽນແປງ ເມື່ອທຽບໃສ່ອາທິດທີ່ຜ່ານມາ ຊຶ່ງໃນອາທິດນີ້ ແມ່ນບໍ່ມີການຈັບຄູ່ຊື້-ຂາຍ. ສັດສ່ວນຖືຄອງຮຸ້ນຂອງຜູ້ລົງທຶນຕ່າງປະເທດແມ່ນ 2,70%[4].

ຮຸ້ນຂອງບໍລິສັດ ປີໂຕຣລ້ຽມເທຣດດິ້ງ ລາວ ມະຫາຊົນ (PTL) ມີລາຄາຊື້-ຂາຍສະເລ່ຍ 4.092 ກີບ/ຮຸ້ນ ຫຼຸດລົງ 91 ກີບ/ຮຸ້ນ ເມື່ອທຽບໃສ່ອາທິດທີ່ຜ່ານມາ, ມີປະລິມານຊື້-ຂາຍທັງໝົດ 59.145 ຮຸ້ນ ແລະ ມີມູນຄ່າການຊື້-ຂາຍ 242,02 ລ້ານກີບ ຫຼຸດລົງ 95,53% ເມື່ອທຽບໃສ່ອາທິດຜ່ານມາ. ໂດຍເປັນການຊື້-ຂາຍຂອງ ຜູ້ລົງທຶນຕ່າງປະເທດສະເລ່ຍກວມເອົາ 21,69% ຂອງມູນຄ່າການຊື້-ຂາຍຂອງຮຸ້ນ PTL ທັງໝົດ. ສັດສ່ວນຖືຄອງຮຸ້ນຂອງຜູ້ລົງທຶນຕ່າງປະເທດແມ່ນ 12,69%[5].

**3. ວຽກງານອື່ນໆ ທີ່ພົ້ນເດັ່ນ.**

- ສໍາເລັດການປັບປຸງຮ່າງບົດບັນທຶກຊວດຈໍາ (MOU) ທີ່ໜ່ວຍງານຂໍ້ມູນຕ້ານການຟອກເງິນ ປະເທດກໍາປູເຈຍ (CAFIU) ໄດ້ມີຄໍາເຫັນພ້ອມທັງສົ່ງກັບຄືນໄປຍັງ ໜຕຟງ ກໍາປູເຈຍ;
- ສໍາເລັດການສັງລວມແຊັກ ທຸກຮູບແບບ ແລະ ທຸກສະກຸນເງິນຂອງທະນາຄານທຸລະກິດ;
- ສໍາເລັດການເຂົ້າຮ່ວມກອງປະຊຸມສະຫຼຸບວຽກງານປະຈໍາປີ 2014 ແລະ ມອບໃບອະນຸຍາດດໍາເນີນທຸລະກິດຖາວອນໃຫ້ແກ່ສະຫະກອນສິນເຊື່ອ ແລະ ເງິນຝາກປະຢັດ ທີ່ແຂວງບໍລິຄໍາໄຊ;

---

[2] ສັດສ່ວນຖືຄອງຮຸ້ນ BCEL ຂອງຜູ້ລົງທຶນຕ່າງປະເທດສາມາດຖືຄອງຮຸ້ນລວມກັນທັງໝົດ ບໍ່ເກີນ 10%;

[3] ສັດສ່ວນຖືຄອງຮຸ້ນ EDL-Gen ຂອງຜູ້ລົງທຶນຕ່າງປະເທດສາມາດຖືຄອງຮຸ້ນລວມກັນທັງໝົດ ບໍ່ເກີນ 20%;

[4] ສັດສ່ວນຖືຄອງຮຸ້ນ LWPC ຂອງຜູ້ລົງທຶນຕ່າງປະເທດ ແມ່ນບໍ່ມີກໍານົດ;

[5] ສັດສ່ວນຖືຄອງຮຸ້ນ PTL ຂອງຜູ້ລົງທຶນຕ່າງປະເທດ ແມ່ນບໍ່ມີກໍານົດ.

- ສຳເລັດການມອບໃບອະນຸຍາດດຳເນີນທຸລະກິດຖາວອນໃຫ້ແກ່ ສສງ ເຂດປາກທອນ;
- ສຳເລັດການອອກໃບອະນຸຍາດປ່ຽນຊື່ຂອງທະນາຄານ ຊີໄອເອັມບີໄທ ສາຂາວຽງຈັນ.

III. <u>ແຜນວຽກຈຸດສຸມອາທິດຕໍ່ໄປ:</u>

- ສືບຕໍ່ພິມທະນະບັດງວດ 5 ປະເພດໃບ 2,000 ກີບໃໝ່ ລຸ້ນປີ 2011 ຈຳນວນ 60 ລ້ານໃບ;
- ສືບຕໍ່ຄົ້ນຄວ້າ: ❶ ຄົ້ນຄວ້າກ່ຽວກັບການສ້າງລະບົບຕ້ານການຟອກເງິນທີ່ທັນສະໄໝ ໂດຍສະເພາະແມ່ນລະບົບ IT, ❷ ຄົ້ນຄວ້າເນື້ອໃນຂອງຫຼັກການບາແຊວ 2 ແລະ ບົດຮຽນຂອງບັນດາປະເທດທີ່ຈັດຕັ້ງປະຕິບັດການຄຸ້ມຄອງທະນາ ຄານ ຕາມຫຼັກການບາແຊວ 2, ❸ ສືບຕໍ່ຄົ້ນຄວ້າຮ່າງລະບຽບ RTGS ວ່າດ້ວຍ: ລະບົບຊຳລະສະສາງມູນຄ່າ (RTGS) ໃນ ລະບົບແຫ່ງຊາດ ແລະ ລະບຽບເງິນເອເລັກໂທຣນິກ, ❹ ສືບຕໍ່ຄົ້ນຄວ້າການກຳນົດລະບຽບເງິນເອເລັກໂທຣນິກ (E-Money) ອີງຕາມພະລາດຊະດຳລັດກາວ່າດ້ວຍ ການຄວບຄຸມດູແລ ແລະ ທຸລະກິດບໍລິການຊຳລະເງິນທາງເອເລັກໂທຣນິກ ພ.ສ 2551 ຂອງປະເທດໄທ, ❺ ສືບຕໍ່ຄົ້ນຄວ້າການເຂົ້າເປັນສະມະຊິກ AFI (Alliance Financial Inclusion) ມູນລະ ນິທິ ເພື່ອການເຂົ້າເຖິງແຫຼ່ງທຶນທີ່ທົ່ວເຖິງ.

ຫົວໜ້າຫ້ອງການທະນາຄານແຫ່ງ ສປປ ລາວ,

ທະນາຄານແຫ່ງ ສປປ ລາວ ຫ້ອງການ

ພາສີ ພິມມະກອນ